Lasonexay

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ງານນາຍົກລັດຖະມົນຕີ — ເລກທີ 1150 / ສນຍ.

# ຂໍ້ກໍານົດ

## ວ່າດ້ວຍການສ້າງຕັ້ງ ແລະການເຄື່ອນໄຫວທຸລະກິດທ່ອງທ່ຽວ

---

- ອີງຕາມດໍາລັດຂອງນາຍົກລັດຖະມົນຕີ ເລກທີ 100 / ນຍ , ລົງວັນທີ 23 / 12 / 93 ວ່າດ້ວຍການສ້າງຕັ້ງ ແລະເຄື່ອນໄຫວຂອງອົງການທ່ອງທ່ຽວແຫ່ງຊາດ .

ເພື່ອຈັດຕັ້ງປະຕິບັດ ແນວທາງນະໂຍບາຍຂອງພັກ ແລະລັດຖະບານ ແຫ່ງ ສປປ ລາວ ໃນການເປີດກວ້າງ ສາຍພົວພັນຮ່ວມມືທາງດ້ານເສດຖະກິດ ກັບຕ່າງປະເທດ ຢ່າງມີປະສິດທິພາບ ແນໃສ່ການພັດທະນາ ປະເທດຊາດ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໃຫ້ດີຂື້ນຢ່າງບໍ່ຢຸດຢັ້ງ .

ເພື່ອເຮັດໃຫ້ການເຄື່ອນໄຫວທຸລະກິດທ່ອງທ່ຽວໃນທົ່ວປະເທດ ໄດ້ດໍາເນີນໄປຢ່າງມີຄຸນນະພາບ, ຮັບປະກັນ ວຽກງານປ້ອງກັນຊາດ ປ້ອງກັນຄວາມສະຫງົບ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຮັກສາວັດທະນະທໍາ ຮີດຄອງປະເພນີອັນດີງາມຂອງຊາດ, ອະນຸລັກສິ່ງແວດລ້ອມ, ອໍານວຍຄວາມສະດວກ ແລະຮັບປະກັນຄວາມປອດໄພ ໃຫ້ແກ່ນັກທ່ອງທ່ຽວ .

ສໍານັກງານນາຍົກລັດຖະມົນຕີ ອອກຂໍ້ກໍານົດ :

## ພາກທີ I.

### ວ່າດ້ວຍນິຍາມ

1.1 : ອຸດສາຫະກໍາທ່ອງທ່ຽວ.

ອຸດສາຫະກໍາທ່ອງທ່ຽວ ແມ່ນການສະໜອງການບໍລິການແກ່ນັກທ່ອງທ່ຽວ ພາຍໃນ ແລະ ຕ່າງປະເທດ ຢ່າງເປັນລະບົບ ຄົບວົງຈອນ ຢູ່ພາຍໃນປະເທດ ສປປລາວ ໂດຍມີການໃຊ້ຈ່າຍ ຄ່າບໍລິການດັ່ງກ່າວ .

ອຸດສາຫະກໍາທ່ອງທ່ຽວ ໃນນີ້ລວມເອົາ :

.1. ການທຸລະກິດ ນໍາທ່ຽວ .

.2. ການທຸລະກິດ ໂຮງແຮມ ທ່ອງທ່ຽວ.

.3. ການທຸລະກິດ ກິນດື່ມ , ອາຫານ , ບັນເທີງ ແລະສະຖານທີ່ທ່ອງທ່ຽວຕ່າງໆ .

.4 ການທຸລະກິດສິ່ງຂອງທີ່ລະລຶກ , ການຈັດຫັດຖະກໍາສໍາລັບນັກທ່ອງທ່ຽວ .

.5. ການທຸລະກິດການກິລາສໍາລັບນັກທ່ອງທ່ຽວ .

.6. ການຈັດງານສະແດງຜົນງານຕ່າງໆ ທີ່ເປັນຕົວແທນຂອງຄົນລາວບັນດາເຜົ່າ ໃນລະດັບທ້ອງຖິ່ນ ແລະ ລະດັບ ຊາດ ໂດຍມີຈຸດປະສົງໂຄສະນາ ການທ່ອງທ່ຽວ ແລະອື່ນໆ ...

ບັນດາການເຄື່ອນໄຫວທີ່ກ່າວມານັ້ນ ແມ່ນການດຳເນີນທຸລະກິດອຸດສາຫະກຳທ່ອງທ່ຽວ.

2: ນັກທ່ອງທ່ຽວ.

ນັກທ່ອງທ່ຽວ ແມ່ນບຸກຄົນທີ່ເດີນທາງຈາກທີ່ຢູ່ປົກກະຕິ ໄປທ້ອງຖິ່ນ ຫລືປະເທດອື່ນ ຍ້ອນເຫດຜົນຕ່າງໆ ເຊັ່ນ: ເພື່ອການທ່ຽວຊົມ ພັກຜ່ອນ ລື້ນເລີງມ່ວນຊື່ນ, ສຸຂະພາບ, ກິລາ, ສຶກສາຄົ້ນຄ້ວາ ແລະອື່ນໆ ໂດຍບໍ່ມີຈຸດປະສົງຊອກວຽກເຮັດງານທຳ ຫລືລາຍໄດ້ໃນຮູບແບບຕ່າງໆແຕ່ປະການໃດ.

ການເດີນທາງຂອງນັກທ່ອງທ່ຽວ ດັ່ງກ່າວອາດມີການພັກແຮມ ຫລື ບໍ່ມີການພັກແຮມ ຕາມແຕ່ຄວາມຕ້ອງການ.

3: ປະເພດນັກທ່ອງທ່ຽວ.

3.1. ນັກທ່ອງທ່ຽວຊາຍແດນ ແມ່ນນັກທ່ອງທ່ຽວ ທີ່ມາຈາກປະເທດທີ່ມີຊາຍແດນຕິດກັບປະເທດ ສປປລາວ ໂດຍນຳໃຊ້ ເອກະສານຜ່ານແດນ (ແລດເຊ/ປາເຊ) ຫລື ໜັງສືຜ່ານແດນ (ປາສປໍ) ເພື່ອເຂົ້າມາທ່ອງທ່ຽວໃນສະເພາະແຂວງກຳແພງນະຄອນໃດໜື່ງ ເທົ່ານັ້ນ.

ກໍລະນີນັກທ່ອງທ່ຽວຖືໜັງສືຜ່ານແດນ (ປາສປໍ) ເຂົ້າມາ, ຜູ້ກ່ຽວສາມາດເດີນໄປແຂວງອື່ນບົນພື້ນຖານການບໍລິການ ໂດຍບໍລິສັດບໍລິການທ່ອງທ່ຽວກ່ຽວຂ້ອງ.

3.2. ນັກທ່ອງທ່ຽວສາກົນ ແມ່ນນັກທ່ອງທ່ຽວ ທີ່ບໍ່ແມ່ນນັກທ່ອງທ່ຽວຊາຍແດນ ແລະນຳໃຊ້ໜັງສືຜ່ານແດນ ເພື່ອເຂົ້າມາທ່ອງທ່ຽວ ສ.ປ.ປ ລາວ ຊຶ່ງສາມາດເດີນທາງ ໄປແຂວງກຳແພງນະຄອນອື່ນໆໄດ້ ບົນພື້ນຖານການບໍລິການ ໂດຍບໍລິສັດບໍລິການທ່ອງທ່ຽວກ່ຽວຂ້ອງ.

4: ຕໍ່ລາຍການ.

ນັກທ່ອງທ່ຽວທີ່ກ່າວເທິງນີ້ ສາມາດຕໍ່ລາຍການທ່ອງທ່ຽວ ໄດ້ຕາມຄວາມຕ້ອງການ ໂດຍຜ່ານການສະເໜີຂອງບໍລິສັດບໍລິການ ທ່ອງທ່ຽວ ທີ່ເປັນຜູ້ຮັບເຂົ້າມາ ໄປຍັງອົງການທ່ອງທ່ຽວແຫ່ງຊາດ ແລະຂະແໜງການທີ່ກ່ຽວຂ້ອງອື່ນໆ.

5: ການທຸລະກິດທ່ອງທ່ຽວ.

5.1. ການຈັດຕັ້ງທຸລະກິດທ່ອງທ່ຽວ ແມ່ນປະຕິບັດຕາມເງື່ອນໄຂ ຂອງຂໍ້ກຳນົດສະບັບນີ້ ແລະພາຍໃຕ້ການຄຸ້ມຄອງ ແລະ ກວດກາຢ່າງເປັນເອກະພາບໃນທົ່ວປະເທດ ຂອງອົງການທ່ອງທ່ຽວແຫ່ງຊາດ ຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 100/ນຍ, ລົງວັນທີ 23/12/93. ວ່າດ້ວຍການສ້າງຕັ້ງ ແລະການເຄື່ອນໄຫວຂອງອົງການທ່ອງທ່ຽວແຫ່ງຊາດ.

5.2. ລັດສາມາດລົງທຶນ 100 % ຫລື ຫຸ້ນສ່ວນກັບເອກະຊົນ ຕາມຄວາມເໝາະສົມ ເພື່ອຈັດຕັ້ງທຸລະກິດທ່ອງທ່ຽວ.

5.3. ບໍລິສັດບໍລິການທ່ອງທ່ຽວ ແມ່ນຫົວໜ່ວຍທຸລະກິດ ທີ່ໄດ້ຮັບອະນຸຍາດ ໃຫ້ດຳເນີນການບໍລິການ ນັກທ່ອງທ່ຽວຢ່າງຖືກຕ້ອງ ຕາມກົດໝາຍ ແລະຂໍ້ກຳນົດສະບັບນີ້.

6: ຮູບແບບສ້າງຕັ້ງບໍລິສັດບໍລິການທ່ອງທ່ຽວ.

ບຸກຄົນ ຫລື ນິຕິບຸກຄົນ ທີ່ມີສັນຊາດລາວ ແລະມີພູມລຳເນົາຕັ້ງຢູ່ ສ.ປ.ປ. ລາວສາມາດຮ້ອງຂໍສ້າງຕັ້ງວິສາຫະກິດບໍລິການທ່ອງທ່ຽວ ໃນສ່ວນບຸກຄົນ ຫລື ບໍລິສັດບໍລິການທ່ອງທ່ຽວຕາມຮູບແບບຕ່າງໆ ທີ່ກົດໝາຍອະນຸຍາດ.

ສຳລັບບໍລິສັດທ່ອງທ່ຽວຕ່າງປະເທດ ທີ່ໄດ້ມາລົງທຶນ ຫຸ້ນສ່ວນນຳພາກສ່ວນລັດ ແລະ ເອກະຊົນລາວ ໃນໄລຍະຜ່ານມານັ້ນ ແມ່ນອະນຸຍາດໃຫ້ສືບຕໍ່ການເຄື່ອນໄຫວ ຈົນສິ້ນສຸດກຳນົດຂອງສັນຍາ ທີ່ໄດ້ຕົກລົງກັນເປັນກໍລະນີພິເສດ .

**7 : <u>ຂັ້ນຕອນສ້າງຕັ້ງບໍລິສັດ ບໍລິການທ່ອງທ່ຽວ ແລະການເຄື່ອນໄຫວທຸລະກິດ .</u>**

7.1. ບໍລິສັດທີ່ໄດ້ຮັບອະນຸຍາດສ້າງຕັ້ງ ຈະຕ້ອງປະກອບເງື່ອນໄຂ ໃຫ້ຄົບຖ້ວນສົມບູນ ຕາມມາດຕາ 13 , 16 ແລະ 17 . ແລະຜ່ານການກວດກາກວດການ ຕາມມາດຕາ 20 ຂອງຂໍ້ກຳນົດສະບັບນີ້ ຈຶ່ງຈະໄດ້ຮັບອະນຸຍາດດຳເນີນທຸລະກິດ .

7.2. ພາຍຫລັງໄດ້ຮັບອະນຸຍາດດຳເນີນທຸລະກິດທ່ອງທ່ຽວ ຕາມລະບຽບການຢ່າງຖືກຕ້ອງ , ບໍລິສັດ ບໍລິການທ່ອງທ່ຽວກ່ຽວຂ້ອງຕ້ອງໄດ້ໄປຂຶ້ນທະບຽນ ວິສາຫະກິດຢູ່ທີ່ກົມສວຍສາອາກອນ ກະຊວງການເງິນ ສຳລັບບໍລິສັດ ບໍລິການທ່ອງທ່ຽວສາກົນ ຫລື ຢູ່ພະແນກການເງິນທີ່ກ່ຽວຂ້ອງ ສຳລັບບໍລິສັດບໍລິການທ່ອງທ່ຽວຊາຍແດນ ແລະສາຂາຂອງບໍລິສັດ ບໍລິການທ່ອງທ່ຽວສາກົນ ທີ່ຕັ້ງຢູ່ແຂວງ ກຳແພງນະຄອນ ເພື່ອໄດ້ມາເຊິ່ງນິຕິບຸກຄົນ ແລະເຄື່ອນໄຫວຢ່າງຖືກຕ້ອງຕາມກົດໝາຍ .

ການເຄື່ອນໄຫວທຸລະກິດທີ່ຍັງບໍ່ໄດ້ຮັບ ຖານະນິຕິບຸກຄົນ ຈະຖືວ່າ ເປັນການລະເມີດ ຂໍ້ກຳນົດ ສະບັບນີ້ ແລະດຳລັດນາຍົກລັດຖະມົນຕີ ເລກທີ່ 46 /ນຍ , ລົງວັນທີ່ 6 . 3 . 1993 . ບໍລິສັດກ່ຽວຂ້ອງ ຈະຖືກປັບໃໝ ຕັກເຕືອນ ຕາມກໍລະນີ ໜັກເບົາ .

**8 : <u>ການປ່ຽນແປງຮູບແບບຂອງ ວິສາຫະກິດ ຫລື ບໍລິສັດ .</u>**

ບໍລິສັດບໍລິການທ່ອງທ່ຽວ ທີ່ໄດ້ເຄື່ອນໄຫວມາແລ້ວຊົ່ວໄລຍະໜຶ່ງ ແລະມີປະສົງຢາກປ່ຽນແປງ ດັດແກ້ຮູບແບບຂອງບໍລິສັດ ໄປສູ່ຮູບແບບອື່ນ ທີ່ກົດໝາຍອະນຸຍາດ , ຕ້ອງໄດ້ຮັບອະນຸຍາດຈາກອົງການທ່ອງທ່ຽວແຫ່ງຊາດເສຍກ່ອນ ແລະ ຈົດທະບຽນວິສາຫະກິດ ນຳພາກສ່ວນກ່ຽວຂ້ອງ ຈຶ່ງສາມາດດຳເນີນການໄດ້ຢ່າງຖືກຕ້ອງ .

ການປ່ຽນແປງດັດແກ້ ກົດລະບຽບສັນຍາ ຫຸ້ນສ່ວນ , ກຳມະສິດ , ຄະນະບໍລິຫານງານ ຈະຕ້ອງໄດ້ແຈ້ງເປັນທາງການ ໃຫ້ອົງການທ່ອງທ່ຽວແຫ່ງຊາດ ແລະຂະແໜງການອື່ນ ທີ່ກ່ຽວຂ້ອງຊາບ .

ທຸກການປ່ຽນແປງ ດັດແກ້ໃດໆ ທີ່ບໍ່ໄດ້ແຈ້ງໃຫ້ອົງການທ່ອງທ່ຽວແຫ່ງຊາດ ອະນຸມັດ ຫລື ຮັບຊາບ ຈະຖືວ່າເປັນໂມຄະ ແລະເຮັດຜິດກັບລະບຽບການ .

**9 : <u>ອາຍຸໃບອະນຸຍາດດຳເນີນທຸລະກິດທ່ອງທ່ຽວ .</u>**

ໃບອະນຸຍາດດຳເນີນທຸລະກິດບໍລິການທ່ອງທ່ຽວ ມີຜົນໃຊ້ໄດ້ 2 ( ສອງ ) ປີ ບໍລິສັດບໍລິການທ່ອງທ່ຽວກ່ຽວຂ້ອງ ຈະຕ້ອງໄປຂໍຕໍ່ ແລະເສຍຄ່າທຳນຽມຕາມລະບຽບການ ທຸກເທື່ອທີ່ໝົດອາຍຸໃຊ້ .

ການຂໍຕໍ່ໃບອະນຸຍາດ ດຳເນີນທຸລະກິດ ໃນແຕ່ລະຄັ້ງ ຕ້ອງປະກອບເອກະສານດັ່ງນີ້ :

9.1. ຄຳຮ້ອງຂໍຕໍ່ໃບອະນຸຍາດ ດຳເນີນທຸລະກິດ .

9.2. ໃບເສຍອາກອນທຸລະກິດຄັ້ງຫລ້າສຸດ ( ອາກອນຕົວເລກທຸລະກິດ ແລະ ກຳໄລ ) .

9.3. ໃບສະຫລຸບດຸ່ນດ່ຽງ ຊັບສົມບັດຂອງບໍລິສັດ ຄັ້ງຫລ້າສຸດ .

9.4. ໃບຢັ້ງຢືນຖານະການເງິນ ໂດຍທະນາຄານທີ່ກ່ຽວຂ້ອງ .

# ພາກທີ III.

## ວ່າດ້ວຍພາລະບົດບາດ ແລະໜ້າທີ່ຂອງ
## ບໍລິສັດ ບໍລິການທ່ອງທ່ຽວ

### ຕາ 10 : ພາລະບົດບາດ ແລະ ໜ້າທີ່ .

ບໍລິສັດ ບໍລິການທ່ອງທ່ຽວ ມີພາລະບົດບາດ ແລະໜ້າທີ່ ດັ່ງຕໍ່ໄປນີ້ :

10.1. ສ້າງລາຍການທ່ອງທ່ຽວ ພາຍໃຕ້ຄວາມຮັບຜິດຊອບຕົນ ແລະແຈ້ງລາຄາ ແຕ່ລະລາຍການໃຫ້ອົງການທ່ອງທ່ຽວແຫ່ງຊາດ ຊາບ .

10.2. ໂຄສະນາ ແລະສົ່ງເສີມຜະລິດຕະພັນທ່ອງທ່ຽວ ສປປ ລາວ ຢູ່ພາຍໃນ ແລະຕ່າງປະເທດ .

10.3. ເລືອກເຟັ້ນຄູ່ສັນຍາ ຫລື ທົວໂອເປຣາຕໍ ຕ່າງປະເທດ ທີ່ເໝາະສົມ ແລະ ເຊັນຂໍ້ຜູກພັນ ທຸລະກິດ ໂດຍຕົນເອງ .

10.4. ສະເໜີແຜນການຮອງຮັບນັກທ່ອງທ່ຽວ ທີ່ຈະເຂົ້າໃນແຕ່ລະປີ ໃຫ້ຂະແໜງການກ່ຽວຂ້ອງ ຮັບຊາບ ເປັນຕົ້ນ : ອົງການທ່ອງທ່ຽວແຫ່ງຊາດ, ກົມກົງສູນ ກະຊວງການຕ່າງປະເທດ ກົມ 2 ກະຊວງພາຍໃນ ( ສຳລັບ ບໍລິສັດບໍລິການທ່ອງທ່ຽວມີທີ່ຕັ້ງຢູ່ກຳແພງນະຄອນວຽງຈັນ ແລະຂຶ້ນທະບຽນວິສາຫະກິດ ນຳກະຊວງການເງິນ ) ເພື່ອຊາບ .

ສ່ວນບໍລິສັດ ບໍລິການທ່ອງທ່ຽວ ທີ່ມີທີ່ຕັ້ງຢູ່ແຂວງກຳແພງນະຄອນ ແລະຂຶ້ນທະບຽນວິສາຫະກິດນຳແຂວງກຳແພງນະຄອນ ແມ່ນສົ່ງແຜນການຮັບຮອງ ໃຫ້ຂະແໜງການກ່ຽວຂ້ອງ ຂອງແຂວງກຳແພງນະຄອນ ເພື່ອຊາບ .

10.5. ຮັບ - ສົ່ງ ແລະບໍລິການນັກທ່ອງທ່ຽວຂອງຄູ່ສັນຍາຕາມລະບຽບຫລັກການ ໂດຍຮັບປະກັນຄຸນນະພາບ ແລະເນື້ອໃນລາຍການທີ່ໄດ້ກຳນົດໄວ້ນຳກັນ .

10.6. ເຜີຍແຜ່ລະບຽບຫລັກການຕ່າງໆ ທີ່ພົວພັນກັບວຽກງານທ່ອງທ່ຽວ ແລະນັກທ່ອງທ່ຽວ ໃນການເຂົ້າ - ອອກເມືອງ , ດ້ານພາສີ , ດ້ານການເງິນ ແລະອື່ນໆ ...

10.7. ນຳເອົາຂໍ້ຜູກພັນທີ່ໄດ້ເຊັນກັບຕ່າງປະເທດ ມາຜ່ານອົງການທ່ອງທ່ຽວແຫ່ງຊາດ ເພື່ອຮັບຮອງເອົາເປັນທາງການ ແລະນຳເອົາໄປຂຶ້ນທະບຽນສານ ເພື່ອເປັນຫລັກຖານທາງດ້ານກົດໝາຍ .

ພາຍຫລັງຂຶ້ນທະບຽນສານ ຢ່າງຖືກຕ້ອງຕາມກົດໝາຍແລ້ວ , ບໍລິສັດ ບໍລິການທ່ອງທ່ຽວກ່ຽວຂ້ອງ ຕ້ອງສົ່ງຂໍ້ຜູກພັນດັ່ງກ່າວ ໃຫ້ອົງການທ່ອງທ່ຽວແຫ່ງຊາດ , ກົມກົງສູນ ກະຊວງການຕ່າງປະເທດ ແລະ ກົມ2 ກະຊວງພາຍໃນ ບ່ອນລະ ນຶ່ງຊຸດ .

ສຳລັບບໍລິສັດ ບໍລິການທ່ອງທ່ຽວທີ່ຕັ້ງຢູ່ແຂວງກຳແພງນະຄອນ ແລະຂຶ້ນທະບຽນຢູ່ແຂວງກຳແພງນະຄອນ ແມ່ນສົ່ງໃຫ້ຂະແໜງການກ່ຽວຂ້ອງຢູ່ແຂວງ ກຳແພງນະຄອນ ບ່ອນລະນຶ່ງຊຸດ .

10.8. ປະຕິບັດ ພັນທະຕໍ່ລັດ ແລະກອງທຶນແຫ່ງຊາດ ເພື່ອສົ່ງເສີມການທ່ອງທ່ຽວ ຈຳນວນບໍ່ເກີນ 5 % ຂອງລາຍຮັບທຸລະກິດຂອງຕົນ ( ນອກຈາກພາສີອາກອນຕ່າງໆ ) ຕາມລະບຽບຫລັກການ ແລະກຳນົດເວລາຢ່າງຖືກຕ້ອງ .

10.9. ສະເໜີຂໍອະນຸມັດແຕ່ງຕັ້ງຕົວແທນ ຫລືເປີດສາຂາຂອງຕົນຢູ່ແຂວງກຳແພງນະຄອນ ຫລືຢູ່ຕ່າງປະເທດ ຕາມຄວາມຕ້ອງການຂອງບໍລິສັດ ບໍລິການທ່ອງທ່ຽວສາກົນ ໂດຍສະເພາະ .

10.10. ຈັດຕັ້ງປະຕິບັດລະບົບບັນຊີການເງິນ ທີ່ລັດປະກາດໃຊ້ .

10.11. ພົວພັນປະສານສົມທົບກັບເຈົ້າໜ້າທີ່ກ່ຽວຂ້ອງ ເພື່ອສົ່ງເສີມ ແລະພັດທະນາການທ່ອງທ່ຽວ ໃນແຂວງ ກຳແພງນະຄອນກ່ຽວຂ້ອງ ດ້ວຍຮູບແບບຕ່າງໆ ແລະ ປົກປັກຮັກສາ ເອກະລັກຂອງຊາດ ກໍ່ຄືຂອງ ທ້ອງຖິ່ນ , ສ້າງພາບພົດອັນດີງາມໄວ້ເປັນຢ່າງດີ .

10.12. ປະຕິບັດທຸກຂໍ້ກຳນົດກົດລະບຽບ ແລະກົດໝາຍບ້ານເມືອງ ຢ່າງເຂັ້ມງວດຖືກຕ້ອງ .

10.13. ຮ່ວມມືກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງ ທີ່ໄປເຮັດວຽກທາງການ ນຳບໍລິສັດກ່ຽວຂ້ອງ .

10.14. ຮັບປະກັນຄວາມເປັນເອກະລາດ, ອະທິປະໄຕ ແລະຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ໃນການ ພົວພັນ ແລະເຊັນຂໍ້ຜູກພັນກັບ ບໍລິສັດຕ່າງປະເທດ .

ຂໍ້ຕົກລົງ ແລະຂໍ້ຜູກພັນໃດໆ ທີ່ຂັດກັບຈິດໃຈດັ່ງກ່າວ ຖືວ່າເປັນໂມຄະ ແລະບໍ່ມີຜົນບັງຄັບໃຊ້ ແຕ່ປະການໃດ .

10.15. ລົງທຶນສ້າງຜະລິດຕະພັນທ່ອງທ່ຽວ ທີ່ເປັນເອກະລັກຂອງລາວ ພາຍຫລັງໄດ້ດຳເນີນທຸລະກິດມາເປັນ ເວລາ 2 ປີ , ຊ້າສຸດ .

## ພາກທີ່ III.

### ວ່າດ້ວຍປະເພດ ແລະ ຂອບເຂດການເຄື່ອນໄຫວ ຂອງບໍລິສັດ ບໍລິການທ່ອງທ່ຽວ .

ມາດຕາ 11 : ປະເພດການບໍລິການທ່ອງທ່ຽວ

ບໍລິສັດບໍລິການທ່ອງທ່ຽວຕ້ອງຕອບສະໜອງພື້ນຖານຂອງມາດຖານ ແລະເງື່ອນໄຂ ຕາມມາດຕາ 13, 16 ແລະ 17 ຢ່າງຖືກຕ້ອງ ສົມບູນ ຈຶ່ງໄດ້ຮັບໃບອະນຸຍາດ ດຳເນີນທຸລະກິດ ບໍລິການທ່ອງທ່ຽວ . ການດຳເນີນທຸລະກິດ ບໍລິການນັ້ນ ໄດ້ແບ່ງອອກເປັນ 3 ( ສາມ ) ປະເພດດັ່ງນີ້ :

11.1. ປະເພດບໍລິການທ່ອງທ່ຽວສາກົນ

ບໍລິສັດກ່ຽວຂ້ອງຕ້ອງວາງເງິນຄ້ຳປະກັນຈຳນວນ ສິບລ້ານແປດແສນກີບ ( 10.800.000 ກີບ ) ເທົ່າກັບ ນຶ່ງໝື່ນຫ້າພັນ ( 15.000 ) ໂດລາສະຫະລັດ ນຳອົງການທ່ອງທ່ຽວແຫ່ງຊາດ .

11.2. ປະເພດບໍລິການທ່ອງທ່ຽວຊາຍແດນ

ບໍລິສັດກ່ຽວຂ້ອງຕ້ອງວາງເງິນຄ້ຳປະກັນຈຳນວນ ເຈັດລ້ານສອງແສນກີບ ( 7.200.000 ກີບ ) ເທົ່າກັບ ນຶ່ງໝື່ນ ( 10.000 ) ໂດລາສະຫະລັດ ນຳອົງການທ່ອງທ່ຽວແຫ່ງຊາດ ໂດຍຜ່ານຫ້ອງການທ່ອງທ່ຽວ ປະຈຳແຂວງກຳແພງນະຄອນ ທີ່ກ່ຽວຂ້ອງ .

12.3. ປະເພດບໍລິການທ່ອງທ່ຽວສາກົນ ແລະຊາຍແດນ.

ບໍລິສັດທີ່ກ່ຽວຂ້ອງຕ້ອງວາງເງິນຄ້ຳປະກັນຈຳນວນ10.800.000 ກີບ ເທົ່າກັບ15.000 ໂດລາສະຫະລັດ

ແລະ 7.200.000 ກີບ ເທົ່າກັບ 10.000 ໂດລາສະຫະລັດ , ຖ້າມີຄວາມຕ້ອງການບໍລິການຊາຍແດນຢູ່ແຂວງອື່ນ , ພາກສ່ວນກ່ຽວຂ້ອງຈະຕ້ອງວາງເງິນຄ້ຳປະກັນຕື່ມອີກ 7.200.000 ກີບ ແລະຕໍ່ໆໄປ .

ຕ1 : ເງິນຄ້ຳປະກັນດັ່ງກ່າວ ອາດເປັນເງິນສົດ ຫລືເປັນໜັງສືຄ້ຳປະກັນຈາກທະນາຄານທີ່ຕັ້ງຢູ່ ສປປ ລາວ .

ເງິນຄ້ຳປະກັນນີ້ ມີເປົ້າໝາຍເພື່ອນຳໃຊ້ທົດແທນຄ່າເສຍຫາຍ ຫລື ໜີ້ສິນຂອງບໍລິສັດການທ່ອງທ່ຽວ ທີ່ມີຕໍ່ພາກສ່ວນອື່ນໆ ...

ບໍລິສັດບໍລິການທ່ອງທ່ຽວທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດໃນເມື່ອກ່ອນນັ້ນ ພາຍຫລັງ ການກວດກາຂອງເຈົ້າໜ້າທີ່ ອົງການທ່ອງທ່ຽວແຫ່ງຊາດ ແລ້ວເຫັນວ່າ ທຶນຮອນບໍ່ຕອບສະໜອງມາດຖານ ແລະເງື່ອນໄຂຈະຈັດເຂົ້າໃນປະເພດບໍລິສັດບໍລິການທ່ອງທ່ຽວຊາຍແດນ ແມ່ນຈະນະໂຍບາຍໃຫ້ລະດົມທຶນ ໃຫ້ຄົບຕາມຈຳນວນ ໃນກຳນົດ 3 ເດືອນ .

ຖ້າບໍລິສັດບໍລິການທ່ອງທ່ຽວຊາຍແດນດັ່ງກ່າວ ມີຄວາມປະສົງຢາກສືບຕໍ່ບໍລິການນັກທ່ອງທ່ຽວ ຈະຕ້ອງວາງເງິນຄ້ຳປະກັນຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 11.2. ຂອງຂໍ້ກຳນົດສະບັບນີ້ .

<u>ຂອບເຂດການເຄື່ອນໄຫວ</u> .

ຂອບເຂດການເຄື່ອນໄຫວຂອງບໍລິສັດ ບໍລິການທ່ອງທ່ຽວ ໄດ້ກຳນົດດັ່ງນີ້ :

12.1. <u>ປະເພດບໍລິສັດບໍລິການທ່ອງທ່ຽວສາກົນ.</u> ສາມາດເຄື່ອນໄຫວໃນຂອບເຂດທົ່ວປະເທດ ແລະເປີດສາຂາແຕ່ງຕັ້ງຕົວແທນຢູ່ແຂວງຕ່າງໆ , ແຕ່ຕ້ອງໄດ້ຮັບການອະນຸຍາດ ໂດຍອົງການທ່ອງທ່ຽວແຫ່ງຊາດເສຍກ່ອນທຸກເທື່ອມີການເປີດສາຂາ ຫລື ແຕ່ງຕັ້ງຕົວແທນຢູ່ກຳແພງນະຄອນ ແລະແຂວງອື່ນໆ ; ສາຂາຂອງບໍລິສັດດັ່ງກ່າວບໍ່ມີສິດ ບໍລິການທ່ອງທ່ຽວຊາຍແດນໃນກຳແພງນະຄອນ ແລະແຂວງນັ້ນ , ພຽງແຕ່ຮັບບໍລິການແຂກ ຈາກບໍລິສັດແມ່ຂອງຕົນສົ່ງໃຫ້ບໍລິການເທົ່ານັ້ນ .

12.2. <u>ປະເພດບໍລິສັດບໍລິການທ່ອງທ່ຽວຊາຍແດນ.</u> ສາມາດເຄື່ອນໄຫວໃນຂອບເຂດແຂວງເທົ່ານັ້ນ ບໍລິສັດບໍລິການຊາຍແດນ ບໍ່ມີສິດຕັ້ງສາຂາ ຫລື ຕົວແທນຢູ່ແຂວງກຳແພງນະຄອນອື່ນໆ .

ຂໍ້ກຳນົດ ສະບັບນີ້ ອະນຸຍາດ ເປັນກໍລະນີພິເສດ ໃຫ້ມີການເຄື່ອນໄຫວເປັນເອກະພາບ ລະຫວ່າງແຂວງວຽງຈັນ ແລະ ກຳແພງນະຄອນວຽງຈັນ ໃນການນຳທ່ຽວແຂກຊາຍແດນ ຕາມຈຸດທີ່ທາງການໄດ້ອະນຸຍາດ .

12.3. <u>ປະເພດບໍລິການທ່ອງທ່ຽວສາກົນ ແລະ ຊາຍແດນ.</u> ສາມາດເຄື່ອນໄຫວໄດ້ຕາມຂອບເຂດ ທີ່ໄດ້ລະບຸໄວ້ໃນມາດຕາ 12.1. ແລະ 12.2 ໄປພ້ອມໆກັນ .

## ພາກທີ IV.

### <u>ວ່າດ້ວຍເງື່ອນໄຂການທຸລະກິດທ່ອງທ່ຽວ</u>
### <u>ແລະ ອຸດສາຫະກຳທ່ອງທ່ຽວ</u>

າ 13 : <u>ຄວາມສາມາດການປະພຶດ .</u>

13.1. ບຸກຄົນ ຫລື ນິຕິບຸກຄົນ ທີ່ມີຄວາມສາມາດການປະພຶດ ຕາມທີ່ລະບຸໄວ້ໃນມາດຕາ 7 ຂອງກົດໝາຍວ່າດ້ວຍການຜູກພັນ ໃນສັນຍາ ເລກທີ 02 /90ປຊລ , ລົງວັນທີ 27 /11 / 1990 ສາມາດເຄື່ອນໄຫວ ແລະດຳເນີນທຸລະກິດບໍລິການທ່ອງທ່ຽວ ໄດ້ຕາມເງື່ອນໄຂຂອງຂໍ້ກຳນົດສະບັບນີ້ .

13.2. ບຸກຄົນທີ່ມີສັນຊາດລາວ ແລະມີພູມລຳເນົາຕັ້ງຢູ່ ສປປ ລາວ ສາມາດດຳເນີນທຸລະກິດບໍລິການທ່ອງທ່ຽວ ແລະປະກອບອາຊີບນຳທ່ຽວຕາມລະບຽບຫລັກການ .

ມາດຕາ 14 : ຂໍ້ຫ້າມ .

14.1. ຫ້າມບຸກຄົນທີ່ບໍ່ມີຄວາມສາມາດ ປະພຶດ ຕາມກົດໝາຍກຳນົດ , ຂາດສະຕິສຳນຶກ , ເສຍຈິດ , ຖືກສານຕັດສິນຈຳຄຸກ ແຕ່ 3 ເດືອນຂຶ້ນໄປ ຍ້ອນເຫດຜົນ ອາດຊະຍາກຳ , ການສໍ້ໂກງ ( ລັກຊັບ , ຫລອກລວງ ຕົວະຍົວະ ແລະອື່ນໆ... ) ຫລື ຢູ່ໃນໄລຍະການດຳເນີນຄະດີ ຫລື ລໍຖ້າການຕັດສິນຄະດີ ແລະ ບຸກຄົນ ຫລື ນິຕິບຸກຄົນ ຢູ່ໃນໄລຍະດຳເນີນການຕັດສິນລົງໂທດ ຍ້ອນການສໍ້ໂກງທາງເສດຖະກິດ ແລະພາສີອາກອນຂອງລັດ , ຖືກລົ້ມລະລາຍ , ຖືກຖອນໃບອະນຸຍາດ ແລະອື່ນໆ ... ດຳເນີນການທຸລະກິດ ບໍລິການທ່ອງທ່ຽວເປັນເດັດຂາດ.

14.2. ຫ້າມບຸກຄົນ ຫລືນິຕິບຸກຄົນໃດ ທີ່ບໍ່ໄດ້ຮັບອະນຸຍາດ ເຄື່ອນໄຫວບໍລິການທ່ອງທ່ຽວ ແລະອຸດສາຫະກຳທ່ອງທ່ຽວ ເປັນເດັດຂາດ .

ມາດຕາ 15 : ບໍ່ອະນຸຍາດ .

15.1. ຂໍ້ກຳນົດສະບັບນີ້ ບໍ່ອະນຸຍາດໃຫ້ພະນັກງານ ພາລະກອນ ທີ່ສັງກັດຢູ່ໃນອົງການຈັດຕັ້ງລັດ ດຳເນີນທຸລະກິດບໍລິການທ່ອງທ່ຽວ ແລະອຸດສາຫະກຳທ່ອງທ່ຽວ ໃນສ່ວນບຸກຄົນ ເປັນເດັດຂາດ , ຍົກເວັ້ນກໍລະນີໄດ້ຮັບອະນຸຍາດ ໂດຍອົງການຈັດຕັ້ງກ່ຽວຂ້ອງເປັນສະເພາະ .

15.2. ຂໍ້ກຳນົດສະບັບນີ້ ບໍ່ອະນຸຍາດໃຫ້ຜູ້ທີ່ເປັນຜົວ ຫລື ເມຍ ຫລື ລູກຂອງພະນັກງານ ທີ່ສັງກັດໃນອົງການທ່ອງທ່ຽວແຫ່ງຊາດ ຫລື ຕົວແທນຂອງອົງການທ່ອງທ່ຽວແຫ່ງຊາດ ເຄື່ອນໄຫວ ດຳເນີນທຸລະກິດທ່ອງທ່ຽວ ແລະອຸດສາຫະກຳທ່ອງທ່ຽວ ໃນສ່ວນບຸກຄົນ ນັບທັງການຖືຫຸ້ນນຳບໍລິສັດທ່ອງທ່ຽວຕ່າງໆ ເປັນເດັດຂາດ

ມາດຕາ 16 : ມາດຕະຖານພະນັກງານ ບໍລິສັດ ບໍລິການທ່ອງທ່ຽວ ແລະຜູ້ນຳທ່ຽວ .

16.1. ພະນັກງານຂອງບໍລິສັດ ບໍລິການທ່ອງທ່ຽວ ຕ້ອງມີລະດັບຄວາມຮູ້ທາງດ້ານ ການເມືອງ , ເສດຖະກິດ ສັງຄົມ ແລະວິຊາສະເພາະທີ່ກ່ຽວຂ້ອງ, ຊຶ່ງໃນນັ້ນ 2/3 ຕ້ອງສາມາດປາກ ແລະຂຽນພາສາຕ່າງປະເທດ ໄດ້ຕ່ຳສຸດ ນຶ່ງພາສາ .

16.2. ຫົວໜ້າ ຫລືຜູ້ຈັດການບໍລິສັດ ບໍລິການທ່ອງທ່ຽວ ຕ້ອງມີບົດຮຽນ , ປະສົບການ ແລະ ຄວາມຊຳນານ ໃນການເຄື່ອນໄຫວດຳເນີນທຸລະກິດທ່ອງທ່ຽວ ແລະສາມາດປາກ ແລະຂຽນພາສາຕ່າງປະເທດ ຢ່າງໜ້ອຍ 2 ພາສາ , ໃນນັ້ນນຶ່ງພາສາຕ້ອງເປັນພາສາອັງກິດ .

16.3. ພະນັກງານນຳທ່ຽວຂອງບໍລິສັດ ບໍລິການທ່ອງທ່ຽວ ຕ້ອງເປັນບຸກຄົນດັ່ງນີ້ :

- ຈົບຂັ້ນອຸດົມຕ່ຳສຸດ .
- ສາມາດປາກ ແລະຂຽນພາສາຕ່າງປະເທດໄດ້ດີ ຢ່າງໜ້ອຍນຶ່ງພາສາ ( ຝລັ່ງ ຫລື ອັງກິດ ).
- ຜ່ານການອົບຮົມວິຊາການນຳທ່ຽວ ຢູ່ພາຍໃນ ຫລື ຕ່າງປະເທດ , ຈັດຂຶ້ນໂດຍອົງການກ່ຽວຂ້ອງ ແລະ ມີໃບປະກາດສະນີຍະບັດ ຢັ້ງຢືນຖືກຕ້ອງ .
- ຕອບສະໜອງທຸກເງື່ອນໄຂຂອງມາດຕາ 13 ຂອງຂໍ້ກຳນົດສະບັບນີ້ .

ພະນັກງານນຳທ່ຽວຕ້ອງໄປຂຶ້ນທະບຽນນຳອົງການທ່ອງທ່ຽວແຫ່ງຊາດ ເພື່ອຮັບເອົາໃບອະນຸຍາດນຳທ່ຽວ ຢ່າງຖືກຕ້ອງຕາມຫລັກການ.

ຜູ້ນຳທ່ຽວຕ້ອງມີບັດຕິດເອິກ ໃນເວລາປະຕິບັດງານແຕ່ລະຄັ້ງ.

16.4. ບໍລິສັດ ບໍລິການທ່ອງທ່ຽວ ຕ້ອງແຈ້ງລາຍຊື່ພະນັກງານທັງໝົດ ແລະຕົວແທນຂອງຕົນ ຢູ່ພາຍໃນ ແລະຕ່າງປະເທດ ໃຫ້ອົງການທ່ອງທ່ຽວແຫ່ງຊາດຊາບ.

## ພາກທີ V.

### ວ່າດ້ວຍເງື່ອນໄຂສ້າງຕັ້ງບໍລິສັດ ບໍລິການທ່ອງທ່ຽວ

ມາດຕາ 17 : ບໍລິສັດທຸລະກິດທ່ອງທ່ຽວ.

17.1. ມີທຶນ ຈຳນວນ ນຶ່ງຮ້ອຍສີ່ສິບສອງລ້ານກີບ ( 142.000.000 ກີບ ) ຫລື ເທົ່າກັບ ສອງຮ້ອຍພັນ ( 200.000 ) ໂດລາສະຫະລັດອາເມລິກາ ຕ່ຳສຸດ ແລະພ້ອມທັງໃຫ້ກຳນົດເວລາການລະດົມທຶນ.

17.1.1. ມີສຳນັກງານທີ່ເປັນຂອງຕົນເອງ ຫລື ເຊົ່າ.

17.1.2. ມີພື້ນຖານວັດຖຸເຕັກນິກ ການສື່ສານທາງໄກສ໌:

- ໂທລະສັບສອງໜ່ວຍ ຫລື ຫລາຍກ່ວາ.
- ໂທລະສານ ຫລື ໂທລະພິມ ໜຶ່ງຊຸດ ຫລື ຫລາຍກ່ວາ.

17.1.3. ມີພາຫະນະຂົນສົ່ງ ບໍລິການສອງຄັນ ຢ່າງໜ້ອຍ ສາມາດບັນຈຸໄດ້ແຕ່:

- 12 ຫາ 17 ບ່ອນນັ່ງ ໜຶ່ງຄັນ.
- 17 ບ່ອນນັ່ງຂຶ້ນໄປ ໜຶ່ງຄັນ

17.1.4. ພາຫະນະຂົນສົ່ງທຸກຊະນິດ ( ນັບທັງເຮືອ ) ທີ່ນຳໃຊ້ບໍລິການນັກທ່ອງທ່ຽວ ຕ້ອງຮັບປະກັນມາດຖານທາງດ້ານເຕັກນິກ, ມີປະກັນໄພທາງແພ່ງ ຕໍ່ຊີວິດຊັບສິນຂອງນັກທ່ອງທ່ຽວ ນັບທັງພາຫະນະຂົນສົ່ງ.

17.1.5. ມີແຜນການລົງທຶນ ສ້າງສິ່ງ ທີ່ເປັນເອກະລັກຂອງລາວ ຕາມ ມາດຕາ 10,15 ຂອງຂໍ້ກຳນົດ ສະບັບນີ້ ແລະໃນຊ່ວງໄລຍະ 2 ປີຂ້າງສຸດ ຕ້ອງລົງມືປະຕິບັດ.

17.1.6. ສ້າງລາຍການທ່ອງທ່ຽວຕາມຂອບເຂດຮັບຜິດຊອບ ແລະການເຄື່ອນໄຫວຂອງຕົນຈຳນວນ 5ລາຍການ ຢ່າງໜ້ອຍ ແລະຢູ່ໃນແຫລ່ງທ່ອງທ່ຽວ ທີ່ລັດຖະບານອະນຸຍາດ ຢ່າງເປັນທາງການ.

17.1.7. ລາຄາ ລາຍການທ່ອງທ່ຽວ ຕ້ອງປະຕິບັດຕາມຂອບເຂດ ລາຄາທີ່ເໝາະສົມ ສາມາດແຂ່ງຂັນກັບຕະຫລາດສາກົນໄດ້.

## ພາກທີ VI.

### ວ່າດ້ວຍລະບຽບການຂໍສ້າງຕັ້ງບໍລິສັດທຸລະກິດທ່ອງທ່ຽວ

ມາດຕາ 18 : ເອກະສານສະເໜີສ້າງຕັ້ງບໍລິສັດທຸລະກິດທ່ອງທ່ຽວ.

ບຸກຄົນ ຫລື ນິຕິບຸກຄົນ ທີ່ມີຈຸດປະສົງຢາກດຳເນີນທຸລະກິດບໍລິການທ່ອງທ່ຽວ ຕາມເງື່ອນໄຂ ແລະມາດຖານ

ທີ່ໄດ້ກຳນົດໄວ້ໃນມາດຕາ 13,16 ແລະ17 ຂອງຂໍ້ກຳນົດສະບັບນີ້ ຕ້ອງປະກອບເອກະສານຕ່າງໆ ດັ່ງຕໍ່ໄປນີ້ :

18.1. ຄຳຮ້ອງຂໍສ້າງຕັ້ງ ບໍລິສັດ ບໍລິການທ່ອງທ່ຽວ .

18.2. ກົດລະບຽບຂອງບໍລິສັດ ຫລື / ແລະສັນຍາຫຸ້ນສ່ວນທຸລະກິດ .

18.3. ບັນຊີລາຍຊື່ພະນັກງານ ຂອງບໍລິສັດ ພ້ອມສຳນວນເອກະສານ ທີ່ພົວພັນກັບແຕ່ລະຄົນຄື :

18.3.1. ໃບຊີວະປະຫວັດລະອຽດ ຢັ້ງຢືນໂດຍການຈັດຕັ້ງຂັ້ນບ້ານ ບໍ່ເກີນ 3 ເດືອນ .

18.3.2. ໃບກວດກາ ແລະໃບຢັ້ງຢືນສຸກຂະພາບ ອອກໃຫ້ໂດຍໂຮງໝໍຂອງລັດ ( ຄະນະອຳນວຍການ ) .

18.3.3. ບັດປະຈຳຕົວທີ່ມີຜົນໃຊ້ໄດ້ ( ອັດສຳເນົາ ) .

18.3.4. ໃບແຈ້ງໂທດຂອງເຈົ້າຂອງວິສາຫະກິດ ຫລື ຜູ້ອຳນວຍການບໍລິສັດ .

18.3.5. ໃບຢັ້ງຢືນການອົບຮົມ ສຳລັບພະນັກງານນຳທ່ຽວ .

18.4. ບົດວິພາກເສດຖະກິດ ໃນຊ່ວງໄລຍະ 3 ຫາ 5 ປີ .

18.5. ໃບຢັ້ງຢືນປະກັນໄພທາງແພ່ງ ໂດຍບໍລິສັດປະກັນໄພ ພາຍໃນ ຫລື ຕ່າງປະເທດອອກໃຫ້ .

18.6. ລາຍການນຳທ່ຽວໃນຊ່ວງເລີ່ມຮັບຜິດຊອບການເຄື່ອນໄຫວຂອງຕົນ ( ຫ້າລາຍການຢ່າງໜ້ອຍ ) ພ້ອມລາຄາຂອງລາຍການຕ່າງໆ .

- ລາຍການດັ່ງກ່າວຕ້ອງເປັນເອກະລັກຂອງໃນລາວ ແລະບໍ່ຊ້ຳຊ້ອນກັບຂອງພາກສ່ວນອື່ນ.

18.7. ຂໍ້ຕົກລົງໃນເບື້ອງຕົ້ນ ກັບບັນດາ ໂຮງແຮມ ເຊິ່ງເປັນບ່ອນທີ່ຈະນຳເອົາ ນັກທ່ອງທ່ຽວໄປພັກແຮມ ຕາມລາຍການ .

18.8. ໂຄງການລົງທຶນສ້າງສິ່ງ ທີ່ເປັນເອກະລັກຂອງລາວ ພ້ອມດ້ວຍແຜນຜັງລະອຽດ .

18.9. ໃບຢັ້ງຢືນຖານະການເງິນ ແລະຊັບສິນບັດຂອງບໍລິສັດ

- ບັນດາເອກະສານ 18.3 , 18.5 , 18.8., 18.9 ອາດປະກອບໃຫ້ພາຍຫລັງ ໄດ້ຮັບອະນຸຍາດໃຫ້ສ້າງຕັ້ງ ບໍລິສັດ ຢ່າງເປັນທາງການ ຫລື ໃນເວລາການກວດກາກວດການ ຕາມລະບຽບການສຸດທ້າຍ .

<u>ມາດຕາ 19</u> : <u>ຫ້ອງການຮັບຄຳຮ້ອງ</u>

ບັນດາຄຳຮ້ອງຂໍສ້າງຕັ້ງ ບໍລິສັດທຸລະກິດທ່ອງທ່ຽວ ນັບທັງລະດັບສາກົນ ແລະຊາຍແດນ ຈະຕ້ອງສົ່ງໃຫ້ຫ້ອງການ ຂອງອົງການທ່ອງທ່ຽວແຫ່ງຊາດ ເພື່ອພິຈາລະນາຕາມທາງຄວນ ໃນກຳນົດ 3 ເດືອນ ສູງສຸດ .

ສຳລັບບໍລິສັດທຸລະກິດ ທ່ອງທ່ຽວຊາຍແດນ ຕ້ອງຍື່ນຄຳຮ້ອງຕາມຂັ້ນຕອນ ໂດຍມີການຢັ້ງຢືນຈາກແຂວງ ຫລື ກຳແພງນະຄອນທີ່ກ່ຽວຂ້ອງເສຍກ່ອນ .

<u>ມາດຕາ 20</u> : <u>ລະບຽບການສຸດທ້າຍ.</u>

20.1. ກ່ອນໜ້າການເຄື່ອນໄຫວ ແລະດຳເນີນທຸລະກິດບໍລິການ , ບໍລິສັດ ບໍລິການທ່ອງທ່ຽວ ຕ້ອງຜ່ານ ການກວດກາກວດການຄັ້ງສຸດທ້າຍ ຕາມທີ່ໄດ້ລະບຸໄວ້ ໃນມາດຕາ 3 ຂອງຂໍ້ກຳນົດສະບັບນີ້ ໂດຍຄະນະກຳມະການກວດກາກວດການສະເພາະ ຂອງອົງການທ່ອງທ່ຽວແຫ່ງຊາດ .

20.2. ຄະນະກຳມະການ ກວດກາກວດການດັ່ງກ່າວ ມີໜ້າທີ່ ອອກໃບຢັ້ງຢືນ ການກວດກາກວດການ ໃຫ້ພາກສ່ວນກ່ຽວຂ້ອງເປັນລາຍລັກອັກສອນທາງການ ພາຍຫລັງທີ່ສິ້ນສຸດການກວດກາກວດການ .

20.3. ການກວດກາກວດການ ຕ້ອງດຳເນີນການບົນພື້ນຖານເງື່ອນໄຂ ແລະ ມາດຖານ ທີ່ໄດ້ກຳນົດໄວ້ ໃນ ມາດຕາ 13 , 16 ແລະ 17 ຂອງຂໍ້ກຳນົດ ສະບັບນີ້ ແລະລະບຽບການອື່ນໆ ທີ່ກ່ຽວຂ້ອງ .

20.4. ຜ່ານການກວດກາກວດການແລ້ວ ແລະເຫັນວ່າບໍລິສັດກ່ຽວຂ້ອງ ຍັງບໍ່ຕອບສະໜອງມາດຖານ ແລະ ເງື່ອນໄຂພື້ນຖານຂອງການສ້າງຕັ້ງບໍລິສັດ , ບໍລິສັດກ່ຽວຂ້ອງຈະຖືກສັ່ງໂຈະ ແລະ ຫ້າມດຳເນີນການ ບໍລິການເປັນເດັດຂາດ .

ເຈົ້າໜ້າທີ່ ທີ່ກວດກາກວດການ ຈະນະໂຍບາຍໃຫ້ລະດົມທຶນ ໃນກຳນົດ 3 ເດືອນ ແຕ່ຖ້າຍັງບໍ່ ຕອບສະໜອງ , ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຈະຖອນໃບອະນຸຍາດສ້າງຕັ້ງ ເປັນການລົບລ້າງອະນຸຍາດ .

# ພາກທີ່ VII.

## <u>ວ່າດ້ວຍການປະຕິບັດມາດຕະການ</u>

<u>21</u> : <u>ປະເພດມາດຕະການ.</u>

ບຸກຄົນ ຫລື ນິຕິບຸກຄົນ ທີ່ລະເມີດກົດໝາຍ ລະບຽບການ ແລະຂໍ້ກຳນົດສະບັບນີ້ ຈະຖືກປະຕິບັດມາດຕະການ ຕາມກໍລະນີໜັກ ເບົາ ດັ່ງນີ້ :

21.1. ຕັກເຕືອນ ແລະ ປັບໃໝ .

21.2. ປັບໃໝ ແລະໂຈະການດຳເນີນທຸລະກິດ .

21.3. ປັບໃໝ ແລະ ຖອນໃບອະນຸຍາດດຳເນີນທຸລະກິດ .

21.4. ປັບໃໝ ແລະ ກ່າວຟ້ອງໃຫ້ສານຕັດສິນ .

<u>າດຕາ 22</u> : <u>ການຕັກເຕືອນ ແລະປັບໃໝ ເນື່ອງຈາກກໍລະນີດັ່ງນີ້ :</u>

ປ່ອຍປະນັກທ່ອງທ່ຽວ ໄປຕາມລຳພັງ ແລະເກີດມີສະພາບເຊັ່ນ : ຖ່າຍຮູບໃນເຂດຫວງຫ້າມ , ພົວພັນສາວໂສ ເພນີ , ມີອາການເບື່ອເມົາ ແລະສ້າງຄວາມເສຍຫາຍໃຫ້ຄົນອື່ນ... ກໍລະນີດັ່ງກ່າວ ໃນຄັ້ງທີ່ ( 1 ) ຈະຖືກຕັກ ເຕືອນ ແລະປັບໃໝ .

ບໍລິສັດ ບໍລິການທ່ອງທ່ຽວໃດ ຫາກຂາຍພຽງແຕ່ວີຊາແກ່ນັກທ່ອງທ່ຽວ ແລະບໍ່ມີການບໍລິການ ແຕ່ປະການໃດ ກໍ່ຈະຖືວ່າປ່ອຍປະນັກທ່ອງທ່ຽວ ໄປຕາມລຳພັງ .

<u>າດຕ `3</u> : <u>ການປັບໃໝ ຫລື ໂຈະການດຳເນີນທຸລະກິດ ເນື່ອງຈາກກໍລະນີດັ່ງນີ້ :</u>

23.1. ບໍ່ປະຕິບັດຕາມເງື່ອນໄຂ ທີ່ໄດ້ລະບຸໄວ້ ໃນຂໍ້ກຳນົດ ຂອງສຳນັກງານນາຍົກລັດຖະມົນຕີ ວ່າດ້ວຍການ ສ້າງຕັ້ງ ແລະການເຄື່ອນໄຫວທຸລະກິດທ່ອງທ່ຽວຢ່າງຄົບຖ້ວນ .

23.2. ດຳເນີນກິດຈະກຳອື່ນໆ ທີ່ບໍ່ຢູ່ໃນເປົ້າໝາຍທຸລະກິດຂອງຕົນ ໂດຍບໍ່ໄດ້ອະນຸຍາດ .

23.3. ນຳພາທ່ຽວໃນສະຖານທີ່ ທີ່ຫວງຫ້າມ ໂດຍອຳນາດການປົກຄອງ ຫລື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ .

23.4. ຖືກຕັກເຕືອນ ແລະ ປັບໃໝ ( 1 ) ຄັ້ງ ແລ້ວແຕ່ຍັງບໍ່ເຂັດຫລາບ .

23.5. ຝ່າຝືນລະເມີດກົດໝາຍບ້ານເມືອງ .

23.6. ຂົນຂວາຍຂອກຫາສາວ ໂສເພນີ ໃຫ້ນັກທ່ອງທ່ຽວ ( ພາຍໃນ ແລະ / ຫລື ຕ່າງປະເທດ ) .

23.7. ລັກລອບປອມແປງເອກະສານຕ່າງໆ ໃຫ້ນັກທ່ອງທ່ຽວຕ່າງປະເທດ.

23.8. ບໍ່ເສຍພັນທະໃຫ້ລັດ ແລະຄ່າທຳນຽມຕາມແຜນກຳນົດ.

ບໍລິສັດດັ່ງກ່າວ ຈະຖືກຕັກເຕືອນ ແລະປັບໃໝ ເປັນຄັ້ງທີ (2) ຫລື ໃຫ້ໂຈະການ ດຳເນີນທຸລະກິດຊົ່ວຄາວ, ໄລຍະ 3 ເດືອນ ເພື່ອແກ້ໄຂຄວາມຂາດຕົກບົກພ່ອງ ແລະປະຕິບັດຕາມເງື່ອນໄຂ ລະບຽບການ ແລະຂໍ້ກຳນົດສະບັບນີ້:

ມາດຕາ 24: <u>ການປັບໃໝ ຫລື ຖອນໃບອະນຸຍາດດຳເນີນທຸລະກິດ ເນື່ອງຈາກກໍລະນີດັ່ງນີ້:</u>

24.1. ໝົດອາຍຸກຳນົດໃບອະນຸຍາດ ແລະທະບຽນວິສາຫະກິດ ແຕ່ຍັງສືບຕໍ່ບໍລິການ ໂດຍບໍ່ໄປຂໍຕໍ່ໃບອະນຸຍາດ ແລະທະບຽນວິສາຫະກິດຕາມລະບຽບການ.

24.2. ຖືກຕັກເຕືອນ ແລະປັບໃໝ (2) ຄັ້ງ ຫລືຖືກໂຈະການດຳເນີນ ທຸລະກິດເປັນໜຶ່ງ (1) ຄັ້ງ ແລ້ວແຕ່ຍັງບໍ່ເຂັດຫລາບ.

24.3. ລັກລອບປອມແປງບັນຊີການເງິນ ເພື່ອການສໍ້ໂກງລັດ ຫລື ນຳເອົາເງິນອອກຕ່າງປະເທດ ຢ່າງຜິດກົດໝາຍ.

24.4. ລັກລອບເອົາເຄື່ອງຂອງທີ່ ມີຄ່າ ແລະຫວງຫ້າມ ອອກນອກປະເທດຊ່ວຍນັກທ່ອງທ່ຽວ ເຊິ່ງເປັນການຜິດຕໍ່ລະບຽບຄຸ້ມຄອງນັກທ່ອງທ່ຽວ ແລະກົດໝາຍຂອງ ສປປ ລາວ, ບໍລິສັດທຸລະກິດທ່ອງທ່ຽວ ຈະຖືກປັບໃໝ ຫລື ຖອນໃບອະນຸຍາດດຳເນີນທຸລະກິດ ຢ່າງຂັ້ນເດັດ.

ມາດຕາ 25: ຜູ້ທີ່ເຮັດທຸລະກິດນຳທ່ຽວ ໂດຍບໍ່ມີໃບອະນຸຍາດ, ລັກລອບເອົານັກທ່ອງທ່ຽວ ສາກົນ ຫລື ຊາຍແດນ ເຂົ້າມາບໍລິການໂດຍຕົນເອງ (ເຮັດທຸລະກິດທ່ອງທ່ຽວເຖື່ອນ) ຈະຖືກປັບໃໝ ຕາມກໍລະນີ ໜັກ ເບົາ.

ມາດຕາ 26: <u>ການປັບໃໝ ແລະ ກ່າວຟ້ອງດຳເນີນຄະດີ.</u>

ບຸກຄົນ ຫລື ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດທ່ອງທ່ຽວ ແລະບໍລິສັດ ບໍລິການທ່ອງທ່ຽວ ຈະຖືກກ່າວຟ້ອງ ແລະດຳເນີນຄະດີ ເພື່ອໃຫ້ສານຕັດສິນ ໃນກໍລະນີພາກສ່ວນທີ່ກ່ຽວຂ້ອງ ບໍ່ຍິນຍອມແກ້ໄຂຄວາມກະທຳຜິດຂອງຕົນ ຕໍ່ລະບຽບກົດໝາຍຂອງບ້ານເມືອງ.

ມາດຕາ 27: <u>ມູນຄ່າການປັບໃໝ.</u>

ກ່ຽວກັບມູນຄ່າການປັບໃໝນັ້ນ ແມ່ນໃຫ້ປະຕິບັດຕາມຂໍ້ກຳນົດກົດໝາຍ ທີ່ລັດປະກາດໃຊ້.

## ພາກທີ VIII.

## <u>ວ່າດ້ວຍການຈັດຕັ້ງປະຕິບັດຂໍ້ກຳນົດ</u>

ມາດຕາ 28: <u>ໃນທົ່ວປະເທດ.</u>

ຂໍ້ກຳນົດສະບັບນີ້ ມີຜົນສັກສິດ ແລະໃຊ້ໄດ້ ໃນຂອບເຂດທົ່ວປະເທດ.

ຕາ 29 : ຜົນຍ້ອນຫລັງ

ຂໍ້ກຳນົດສະບັບນີ້ ມີຜົນໃຊ້ໄດ້ຍ້ອນຫລັງ ກ່ຽວກັບບັນດາບໍລິສັດ ທຸລະກິດທ່ອງທ່ຽວ ທີ່ໄດ້ສ້າງຕັ້ງຂຶ້ນ ກ່ອນການປະກາດໃຊ້ຂໍ້ກຳນົດສະບັບນີ້ :

ບັນດາບໍລິສັດທຸລະກິດທ່ອງທ່ຽວເຫລົ່ານີ້ ຈະຕ້ອງປັບປຸງຖານະຂອງຕົນໃຫ້ຖືກຕ້ອງ ຕາມເງື່ອນໄຂ ຂອງຂໍ້ກຳນົດສະບັບນີ້ ໃນກຳນົດ 3 ເດືອນ, ນັບແຕ່ມື້ປະກາດໃຊ້ຂໍ້ກຳນົດສະບັບນີ້ ເປັນຕົ້ນໄປ, ຖ້າບໍ່ມີການປັບປຸງຖານະຂອງຕົນ ໃນໄລຍະດັ່ງກ່າວ , ບໍລິສັດທີ່ກ່ຽວຂ້ອງ ຈະຖືກຖອນໃບອະນຸຍາດ ແລະປະກາດຍົກເລີກ .

ຕາ 30 : ສະເພາະໜ້າ .

ທຸກພາກສ່ວນທີ່ມີສ່ວນກ່ຽວຂ້ອງ ຕ້ອງປະຕິບັດຂໍ້ກຳນົດ ສະບັບນີ້ ຢ່າງຄົບຖ້ວນ ລວມທັງພາກສ່ວນ ຄຸ້ມຄອງບໍລິການ ( ດ້ານມະຫາພາກ ) .

ຕາ 31 : ຂໍ້ກຳນົດສະບັບນີ້ ລົບລ້າງ ແລະໃຊ້ແທນທຸກຂໍ້ກຳນົດ ລະບຽບຫລັກການອື່ນໆ ທີ່ຂັດກັບຂໍ້ກຳນົດສະບັບນີ້ ຂໍ້ກຳນົດສະບັບນີ້ ມີຜົນສັກສິດໃຊ້ໄດ້ ນັບແຕ່ໄດ້ຮັບພິມເຜີຍແຜ່ ໃນຈົດໝາຍເຫດທາງການ ເປັນຕົ້ນໄປ .

ວຽງຈັນ , ວັນທີ 25 OCT 1993

ລັດຖະມົນຕີ

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເຊັນ ແລະປະທັບຕາ : ເພົ້າ ບຸນນະພົນ

---

າເນົາຖືກຕ້ອງຕາມສະບັບເດີມ

ລກທີ 2.8.4/ ອທຊ .

ຽງຈັນ , ວັນທີ ........... ......

ອົງການທ່ອງທ່ຽວແຫ່ງຊາດ

[illegible]